ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
====0000====

ລັດຖະບານ ແຫ່ງ ສປປ ລາວ ເລກທີ 114......./ລບ

ນະຄອນຫຼວງວຽງຈັນ, ວັນທີ 6-04-2011

# ດຳລັດ
# ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ໜັງສືສະເໜີ ຂອງ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0547/ອຄ, ລົງວັນທີ 21/3/2011.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເພື່ອອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງ ການນຳເຂົ້າ ແລະ ການສົ່ງອອກ ແນໃສ່ພັດທະນາເສດຖະກິດສັງຄົມ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ປະກອບສ່ວນເຂົ້າໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

**ມາດຕາ 2. ການນຳເຂົ້າ ແລະ ການສົ່ງອອກ**

ການນຳເຂົ້າ ແລະ ການສົ່ງອອກ ແມ່ນ ການນຳເອົາສິນຄ້າ ເຂົ້າມາ ສປປ ລາວ ຫຼື ສົ່ງອອກຈາກ ສປປ ລາວ ລວມທັງ ການນຳເຂົ້າຊົ່ວຄາວ, ການສົ່ງອອກຊົ່ວຄາວ ແລະ ການຜ່ານແດນຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. "ສິນຄ້າ" ໝາຍເຖິງ ວັດສະດຸ ຫຼື ຜະລິດຕະພັນ ທີ່ມີມູນຄ່າທາງເສດຖະກິດ;
2. "ການນຳເຂົ້າ" ໝາຍເຖິງ ການນຳເອົາສິນຄ້າເຂົ້າມາໃນ ສປປ ລາວ ຊຶ່ງລວມເອົາທັງການນຳເຂົ້າຊົ່ວຄາວ;
3. "ການສົ່ງອອກ" ໝາຍເຖິງ ການສົ່ງສິນຄ້າອອກຈາກ ສປປ ລາວ ຊຶ່ງລວມເອົາ ການສົ່ງອອກຊົ່ວຄາວ;
4. "ການນຳເຂົ້າຊົ່ວຄາວ" ໝາຍເຖິງ ການນຳເອົາສິນຄ້າເຂົ້າມາໃນ ສປປ ລາວ ຊົ່ວຄາວ ແລ້ວ ສົ່ງອອກຄືນ ຫຼື ໄປ ປະເທດທີ່ສາມ;
5. "ການສົ່ງອອກຊົ່ວຄາວ" ໝາຍເຖິງ ການສົ່ງສິນຄ້າອອກຈາກ ສປປ ລາວ ຊົ່ວຄາວ ແລ້ວ ນຳເຂົ້າມາຄືນ;
6. "ການຜ່ານແດນ" ໝາຍເຖິງ ການນຳເອົາສິນຄ້າ ຈາກປະເທດໃດໜຶ່ງ ຜ່ານດິນແດນ ສປປ ລາວ ໄປຍັງ ປະເທດທີ່ສາມ;
7. "ຜູ້ນຳເຂົ້າ" ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ອາໄສຢູ່ໃນ ສປປ ລາວ ຫຼື ຕ່າງປະເທດ ທີ່ດຳເນີນການນຳເຂົ້າ;
8. "ຜູ້ສົ່ງອອກ" ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ຫຼື ການຈັດຕັ້ງໃດໜຶ່ງ ທີ່ອາໄສຢູ່ໃນ ສປປ ລາວ ຫຼື ຕ່າງປະເທດ ທີ່ດຳເນີນການສົ່ງອອກ;
9. "ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ" ໝາຍເຖິງ ອົງການລັດທີ່ມີສິດອຳນາດໃນການຄຸ້ມຄອງ ແລະ ອະນຸຍາດ ການນຳເຂົ້າ ແລະ/ຫຼື ການສົ່ງອອກ ສຳລັບແຕ່ລະລາຍການສິນຄ້າ;
10. "ການອຳນວຍຄວາມສະດວກທາງດ້ານການຄ້າ" ໝາຍເຖິງ ການເຮັດໃຫ້ການນຳເຂົ້າ ແລະ ການສົ່ງອອກ ມີຄວາມສະດວກ, ວ່ອງໄວ, ກະທັດຮັດ ແລະ ໂປ່ງໃສ;
11. "ການບໍ່ຈຳແນກປະຕິບັດ" ໝາຍເຖິງການປະຕິບັດລະບຽບການ ແລະ ມາດຕະການຢ່າງສະເໝີພາບກັນ ລະຫວ່າງພາຍໃນ ແລະ ຕ່າງປະເທດ ແລະ ລະຫວ່າງຕ່າງປະເທດດ້ວຍກັນຕໍ່ກັບສິນຄ້າ, ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ໂດຍສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
12. "ຄວາມໂປ່ງໃສ" ໝາຍເຖິງການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງໃນການອອກລະບຽບການ ແລະ ມາດຕະການກ່ຽວກັບ ການນຳເຂົ້າ ແລະ ການສົ່ງອອກ ແລະ ເຮັດໃຫ້ລະບຽບການ ແລະ ມາດຕະການດັ່ງກ່າວ ມີຄວາມຊັດເຈນ ແລະ ຖືກເຜີຍແຜ່ຕໍ່ສາທາລະນະຊົນ ໂດຍສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

ມາດຕາ 4. ຫຼັກການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ

ການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ການອໍານວຍຄວາມສະດວກທາງດ້ານການຄ້າ;
2. ການບໍ່ຈໍາແນກປະຕິບັດ;
3. ຄວາມໂປ່ງໃສ;
4. ຄວາມສອດຄ່ອງກັບ ລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 5. ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ມີຜົນນໍາໃຊ້ສໍາລັບ ຜູ້ນໍາເຂົ້າ, ຜູ້ສົ່ງອອກ, ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ແລະ ເຈົ້າໜ້າທີ່ຂອງອົງການດັ່ງກ່າວ.

## ໝວດທີ 2
## ການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ

### ມາດຕາ 6. ການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ

ການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ປະກອບດ້ວຍມາດຕະການ ດັ່ງນີ້:
1. ການເກືອດຫ້າມການນໍາເຂົ້າ ຫຼື ການສົ່ງອອກ;
2. ການໃຫ້ຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ການສົ່ງອອກ;
3. ການໃຫ້ປະກອບເອກະສານຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ ແລະ ລະບຽບການທາງດ້ານເຕັກນິກ;
4. ນໍາໃຊ້ມາດຕະການແກ້ໄຂທາງການຄ້າ.

ການນໍາໃຊ້ມາດຕະການຄຸ້ມຄອງການນໍາເຂົ້າແລະການສົ່ງອອກຕ້ອງປະຕິບັດໃຫ້ສອດຄ່ອງ ກັບຫຼັກການທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງດໍາລັດສະບັບນີ້.

### ມາດຕາ 7. ການເກືອດຫ້າມການນໍາເຂົ້າ ຫຼື ການສົ່ງອອກ

ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ມີສິດນໍາໃຊ້ມາດຕະການເກືອດຫ້າມການນໍາເຂົ້າ ຫຼື ການສົ່ງອອກສິນຄ້າ. ສໍາລັບສິນຄ້າທີ່ຢູ່ໃນລາຍການສິນຄ້າເກືອດຫ້າມການນໍາເຂົ້າ ຫຼື ການສົ່ງອອກ ຕ້ອງໄດ້ຮັບອະນຸຍາດຈາກ ລັດຖະບານ ແຫ່ງ ສປປ ລາວ ຈຶ່ງສາມາດນໍາເຂົ້າ ຫຼື ສົ່ງອອກໄດ້, ຂັ້ນຕອນການຂໍອະນຸຍາດດັ່ງກ່າວໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 8. ການໃຫ້ຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ການສົ່ງອອກ

ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ມີສິດກໍານົດໃຫ້ ຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ຂໍອະນຸຍາດ ກ່ອນການ ນໍາເຂົ້າ ຫຼື ການສົ່ງອອກ.

ສຳລັບຂັ້ນຕອນການອອກໃບອະນຸຍາດການນຳເຂົ້າແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ. ຂັ້ນຕອນການອອກໃບອະນຸຍາດການສົ່ງອອກ ໃຫ້ປະຕິບັດຄືກັນກັບ ຂັ້ນຕອນການອອກໃບອະນຸຍາດການນຳເຂົ້າ.

**ມາດຕາ 9. ການໃຫ້ປະກອບເອກະສານຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ ແລະ ລະບຽບການທາງດ້ານເຕັກນິກ**

ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ມີສິດກຳນົດໃຫ້ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກປະກອບເອກະສານຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ ຫຼື ປະຕິບັດຕາມລະບຽບການທາງດ້ານເຕັກນິກ ກ່ອນການນຳເຂົ້າ ຫຼື ການສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງດັ່ງກ່າວ.

**ມາດຕາ 10. ມາດຕະການແກ້ໄຂທາງການຄ້າ**

ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ມີສິດນຳໃຊ້ມາດຕະການແກ້ໄຂທາງການຄ້າເຊັ່ນ: ມາດຕະການຕ້ານການທຸ້ມຕະຫຼາດ, ມາດຕະການຕ້ານການຖົມຊຸມ ແລະ ມາດຕະການປົກປ້ອງຊົ່ວຄາວ, ຕາມກຳລະນີ ແລະ ເງື່ອນໄຂທີ່ສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

## ໝວດທີ 3
## ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ

**ມາດຕາ 11. ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ**

ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ແມ່ນບັນດາຂະແໜງການຕ່າງໆ ເຊັ່ນ: ຂະແໜງ ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ສາທາລະນະສຸກ, ວິທະຍາສາດ ແລະ ເຕັກໂນໂລຊີ, ຖະແຫຼງຂ່າວ ແລະ ວັດທະນະທຳ, ປ້ອງກັນປະເທດ, ໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນໆ.

ໃຫ້ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກຳນົດ ແລະ ອອກລາຍການຕ່າງໆ ດັ່ງນີ້:

1. ລາຍການສິນຄ້າເກືອດຫ້າມການນຳເຂົ້າ;
2. ລາຍການສິນຄ້າເກືອດຫ້າມການສົ່ງອອກ;
3. ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ;
4. ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການສົ່ງອອກ;
5. ລາຍການສິນຄ້າທີ່ຕ້ອງຜ່ານມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ;

6. ລາຍຊື່ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ສຳລັບແຕ່ລະລາຍການສິນຄ້າຂ້າງເທິງ.

### ມາດຕາ 12. ສິດ ແລະ ໜ້າທີ່ ຂອງ ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ

ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ມາດຕະການ ໃນການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ;
2. ກຳນົດລະບຽບການເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ;
3. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
4. ພິຈາລະນາ ອອກໃບອະນຸຍາດການນຳເຂົ້າ ແລະ ການສົ່ງອອກ;
5. ຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນໝວດ2 ຂອງດຳລັດສະບັບນີ້;
6. ຮັບພິຈາລະນາ ແກ້ໄຂຄຳສະເໜີ ຂອງຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ ກ່ຽວກັບ ການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ;
7. ປະຕິບັດ ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ໃນການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ;
8. ສຳລັບຂະແໜງການອື່ນ ໃຫ້ຄວາມຮ່ວມມືກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນ ການປະຕິບັດສິດ ແລະ ໜ້າທີ່ ຂອງຂະແໜງການດັ່ງກ່າວ ຕາມ ທີ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້;
9. ຕິດຕາມ, ກວດກາ, ສະຫຼຸບ, ລາຍງານ ແລະ ສະເໜີ ວິທີການແກ້ໄຂ ກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ 4
## ສິດ ແລະ ພັນທະ ໃນການນຳເຂົ້າ ແລະ ການສົ່ງອອກ

### ມາດຕາ 13. ສິດ ໃນການນຳເຂົ້າ ແລະ ການສົ່ງອອກ

ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ ມີສິດນຳເຂົ້າ ຫຼື ສົ່ງອອກ ຕາມແຕ່ລະ ກໍລະນີ ດັ່ງນີ້:

1. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຂໍອະນຸຍາດການນຳເຂົ້າ ຫຼື

ການສົ່ງອອກ ພາຍຫຼັງທີ່ໄດ້ຮັບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຈາກອົງການຄຸ້ມຄອງ ການນຳເຂົ້າ ແລະ ການສົ່ງອອກ;

2. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຜ່ານມາດຕະການສຸຂາ ນາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ພາຍຫຼັງທີ່ໄດ້ ຜ່ານ ການກວດສອບ ຫຼື ການຢັ້ງຢືນມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະ ບຽບການທາງດ້ານເຕັກນິກ ຈາກອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ຫຼື ຈາກອົງການຢັ້ງຢືນອື່ນ ທີ່ໄດ້ຮັບມາດຕະຖານສາກົນ ຂອງປະເທດສົ່ງອອກ ຫຼື ປະ ເທດທີ່ສາມ ທີ່ຮັບຮູ້ໂດຍ ລັດຖະບານແຫ່ງ ສປປ ລາວ;

3. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ບໍ່ຢູ່ໃນລາຍການຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຫຼື 2 ຂ້າງ ເທິງນີ້ ໂດຍດຳເນີນການແຈ້ງເອກະສານນຳເຂົ້າ ຫຼື ສົ່ງອອກ ຢູ່ດ່ານພາສີໄດ້ເລີຍ.

**ມາດຕາ 14. ການແຍກກັນລະຫວ່າງສິດໃນການນຳເຂົ້າ ແລະ ການສົ່ງອອກ ແລະ ສິດຈຳໜ່າຍສິນຄ້າ**

ສິດໃນການນຳເຂົ້າ ແລະ ການສົ່ງອອກ ແມ່ນແຍກຈາກສິດຈຳໜ່າຍສິນຄ້າ. ບຸກຄົນ ຫຼື ນິຕິ ບຸກຄົນ, ພາຍໃນ ຫຼື ຕ່າງປະເທດ ຈະໄດ້ສິດຈຳໜ່າຍສິນຄ້າ ກໍຕໍ່ເມື່ອໄດ້ຮັບອະນຸຍາດໃຫ້ດຳ ເນີນທຸລະກິດຈຳໜ່າຍສິນຄ້າທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 15. ສິດ ໃນການຮ້ອງທຸກ**

ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ມີສິດ ສະເໜີຮ້ອງທຸກ ກ່ຽວກັບ ການນຳເຂົ້າ ແລະ ການສົ່ງອອກ ໄປຍັງພາກສ່ວນທີ່ກ່ຽວຂ້ອງໃນກໍລະນີທີ່ເຫັນວ່າຕົນເອງໄດ້ຮັບຄວາມເສຍຫາຍຈາກການ ປະຕິບັດໜ້າທີ່ທີ່ບໍ່ຖືກຕ້ອງ ຂອງ ພະນັກງານ ຫຼືເຈົ້າໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດ ໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 16. ພັນທະໃນການນຳເຂົ້າ ແລະ ການສົ່ງອອກ**

ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ມີພັນທະ ດັ່ງນີ້:

1. ປະຕິບັດດຳລັດສະບັບນີ້, ກົດໝາຍວ່າດ້ວຍພາສີ, ລະບຽບກົດໝາຍທີ່ກ່ຽວ ຂ້ອງຂອງ ສປປ ລາວ;
2. ແຈ້ງຂໍ້ມູນ ທີ່ກ່ຽວຂ້ອງກັບ ການນຳເຂົ້າ ຫຼື ການສົ່ງອອກ ຂອງຕົນໃຫ້ອົງການ ຄຸ້ມຄອງ ການນຳເຂົ້າ ແລະ ການສົ່ງອອກ ໃນກໍລະນີທີ່ອົງການດັ່ງກ່າວຮ້ອງຂໍ.

## ໝວດທີ 5

## ການນຳເຂົ້າຊົ່ວຄາວ, ການສົ່ງອອກຊົ່ວຄາວ ແລະ ການຜ່ານແດນ

**ມາດຕາ 17. ການນຳເຂົ້າຊົ່ວຄາວ**

ການນຳເຂົ້າຊົ່ວຄາວ ຕ້ອງປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ສາມາດນຳເຂົ້າ ສິນຄ້າທຸກປະເພດ ຊົ່ວຄາວເພື່ອສົ່ງອອກຄືນ ຕາມລະບຽບການ ແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ ໃນ ມາດຕາ 13 ຂອງ ດຳລັດສະບັບນີ້.
2. ໃນເວລາສົ່ງອອກຄືນ ຖ້າຫາກມີການດັດແປງ, ເສີມແຕ່ງ ຫລື ເພີ່ມເຕີມອຸປະກອນໃດໜຶ່ງ ຊຶ່ງເຮັດໃຫ້ສິນຄ້າດັ່ງກ່າວປ່ຽນປະເພດ ແມ່ນໃຫ້ປະຕິບັດຕາມລະບຽບການ ແຕ່ລະກໍລະນີ ຕາມ ທີ່ກຳນົດໄວ້ ໃນ ມາດຕາ 13 ຂອງ ດຳລັດສະບັບນີ້.
3. ສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າຊົ່ວຄາວຕ້ອງສົ່ງອອກຄືນພາຍໃນກຳນົດເວລາ ຕາມ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ພາສີ.

### ມາດຕາ 18. ການສົ່ງອອກຊົ່ວຄາວ

ການສົ່ງອອກຊົ່ວຄາວ ຕ້ອງປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກ ສາມາດສົ່ງສິນຄ້າອອກຊົ່ວຄາວ ເພື່ອການນຳເຂົ້າຄືນໄດ້ ຕາມລະບຽບການແຕ່ລະກໍລະນີ ຕາມທີ່ກຳນົດໄວ້ ໃນ ມາດຕາ 13 ຂອງ ດຳລັດສະບັບນີ້.
2. ໃນເວລານຳເຂົ້າຄືນ ຖ້າຫາກມີການດັດແປງ, ເສີມແຕ່ງ ຫລື ເພີ່ມເຕີມອຸປະກອນໃດໜຶ່ງ ຊຶ່ງເຮັດໃຫ້ສິນຄ້າດັ່ງກ່າວປ່ຽນປະເພດ. ແມ່ນໃຫ້ປະຕິບັດຕາມລະບຽບການ ແຕ່ລະກໍລະນີ ທີ່ກຳນົດໄວ້ໃນ ມາດຕາ 13 ຂອງດຳລັດສະບັບນີ້.
3. ສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ສົ່ງອອກຊົ່ວຄາວຕ້ອງສົ່ງອອກພາຍໃນກຳນົດເວລາຕາມທີ່ ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍພາສີ.

### ມາດຕາ 19. ການຜ່ານແດນ

ການຜ່ານແດນ ຕ້ອງປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ ສາມາດ ນຳເຂົ້າ ຫຼື ສົ່ງອອກ ສິນຄ້າ ຜ່ານແດນ ຕາມລະບຽບການແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງ ດຳລັດສະບັບນີ້.
2. ການນຳສິນຄ້າຜ່ານດິນແດນ ສປປ ລາວ ຕ້ອງຖືກຈັດສົ່ງຕາມເສັ້ນທາງ, ດ່ານເຂົ້າ-ອອກ, ເວລາທີ່ໄດ້ກຳນົດໄວ້ ແລະ ຄົບຕາມຈຳນວນ ແລະ ຢູ່ໃນສະພາບເດີມ ພາຍໃຕ້ການຕິດຕາມຂອງເຈົ້າໜ້າທີ່ພາສີ ຂອງ ສປປ ລາວ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 20. ຂໍ້ຫ້າມ ສຳລັບພະນັກງານ ຫຼື ເຈົ້າໜ້າທີ່

ໃນການປະຕິບັດໜ້າທີ່ ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ສວຍໃຊ້ອຳນາດເກີນຂອບເຂດ ທີ່ເປັນການບັງຄັບ ແລະ ນາບຂູ່ ເຊັ່ນ: ໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ໃຊ້ການກະທຳ ແລະ ວາຈາທີ່ຫຍາບຊ້າ;

3. ປະລະໜ້າທີ່ ແລະ ລົບຫຼີກການເຄື່ອນໄຫວວຽກງານ;
4. ເມີນເສີຍ, ປະໝາດ, ຂາດຄວາມຮັບຜິດຊອບ, ບິດເບືອນຄວາມຈິງ;
5. ປິດບັງ, ປົກປ້ອງ, ເຊື່ອງອຳ ແລະ ໃຫ້ຄວາມຮ່ວມມືແກ່ ຜູ້ກະທຳຄວາມຜິດ ເພື່ອຮັບສິນບົນ ຫຼື ຜົນປະໂຫຍດແບບອື່ນ;
6. ເປີດເຜີຍຄວາມລັບທີ່ໄດ້ຈາກ ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ ນອກເໜືອຈາກ ເປົ້າໝາຍການຄຸ້ມຄອງການນຳເຂົ້າ ຫຼື ການສົ່ງອອກ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ; ຫຼື
7. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 21. ຂໍ້ຫ້າມ ສຳລັບ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ

ຫ້າມຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ການສົ່ງອອກ ຍົກເວັ້ນໃນກໍລະນີທີ່ໄດ້ຮັບອະນຸຍາດ ຈາກລັດຖະບານແຫ່ງ ສປປ ລາວ;
2. ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ການສົ່ງອອກ ກ່ອນໄດ້ຮັບອະນຸຍາດ;
3. ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຜ່ານມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ກ່ອນໄດ້ຜ່ານການກວດສອບ ຫຼື ການຢັ້ງຢືນມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ.

## ໝວດທີ 7
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 22. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 23. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 24. ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 25. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງເກົ້າສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ວ່າດ້ວຍ ການຄຸ້ມຄອງການສົ່ງອອກ ແລະ ການນຳເຂົ້າ ສະບັບເລກທີ 205/ນຍ, ລົງວັນທີ 11 ຕຸລາ 2001.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ